ກົມແຜນການ ແລະ ການເງິນ
ຂາເຂົ້າ ເລກທີ 1355
ວັນທີ 5/7/2024

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ເລກທີ 2939 /ກສລ
ນະຄອນຫລວງວຽງຈັນ, ວັນທີ 04 ກໍລະກົດ 2024

# ສະໂໜດນຳສົ່ງ

ຮຽນ: ທ່ານຫົວໜ້າກົມແຜນການ ແລະ ການເງິນ, ກະຊວງ ຍທຂ ທີ່ນັບຖື
ເລື່ອງ: ຂໍນຳສົ່ງໜັງສືປະກາດການປະມູນເປີດກວ້າງ ວຽກຈັດຊື້ພາຫະນະຮັບໃຊ້ວຽກງານ ເຕັກນິກ-ວິຊາການ ປະກອບໃຫ້ສະໜາມບິນສາກົນວັດໄຕ ແລະ ສະໜາມບິນໜອງຄ້າງ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງສະໜາມບິນລາວ ສະບັບເລກທີ 11792/ຍທຂ, ລົງວັນທີ 25 ພຶດສະພາ 2022;
- ອີງຕາມ ແຈ້ງການ ສະບັບເລກທີ 37868/ກຜງ, ລົງວັນທີ 03 ມັງກອນ 2024.

ເອກະສານທີ່ສົ່ງມາ ປະກອບມີ:

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 1. | ໜັງສືແຈ້ງເຊີນປະມູນເປີດກວ້າງພາຍໃນ ວຽກຈັດຊື້ພາຫະນະຮັບໃຊ້ວຽກງານເຕັກນິກ-ວິຊາການ ປະກອບໃຫ້ສະໜາມບິນສາກົນວັດໄຕ ແລະ ສະໜາມບິນໜອງຄ້າງ ສະບັບເລກທີ 2848/ກສລ, ລົງວັນທີ 28 ມິຖຸນາ 2024. | 01 ສະບັບ | ເພື່ອອັບໂຫຼດລົງເວບໄຊ ກະຊວງ ການເງິນ |

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖື

ເຊັນແທນ ຫົວໜ້າກອງ
ຮອງຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ ... ກອງສະໜາມບິນລາວ

ສັກດາ ສຸຣິສັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ເລກທີ 2848 ກສລ
ນະຄອນຫລວງວຽງຈັນ, ວັນທີ 28 ມິຖຸນາ 2024

## ໜັງສືແຈ້ງເຊີນປະມູນເປີດກ້ວາງ

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ເຂົ້າຍື່ນຊອງປະມູນເປີດກວ້າງສຳລັບວຽກຈັດຊື້ພາຫະນະຮັບໃຊ້ວຽກງານເຕັກນິກ-ວິຊາການ ປະກອບໃຫ້ສະໜາມບິນສາກົນວັດໄຕ ແລະ ສະໜາມບິນໜອງຄ້າງ, ໄລຍະການມອບ-ຮັບ ແມ່ນ 30 ວັນ;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ທີ່ກ່ຽວພັນກັບການສະໜອງພາຫະນະ ປະຈຳປີ 2024;
4. ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດຊອບ: ທ່ານ ຈັນມະນີ ຄູນໄຊຍະບົວສີ ໂທລະສັບ: 020 55686696 ແລະ ທ່ານ ນາງ ດາລີນ້ຳ ພົມມະຈັກ ໂທລະສັບ: 020 55002931 ໃນເວລາລັດຖະການ;
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຂໍ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ 27 ມິຖຸນາ 2024 ເປັນຕົ້ນໄປ, ໃນລາຄາ 3,000,000 ກີບ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ 14:00 ນາທີ ຂອງວັນທີ 31 ກໍລະກົດ 2024 ທີ່ຫ້ອງປະຊຸມເບີ 02 ກອງສະໜາມບິນລາວ. ຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 14:10 ນາທີ ຂອງວັນທີ ແລະ ສະຖານທີ່ຮັບຊອງປະມູນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້;
7. ທຸກໆ ຊອງປະມູນຕ້ອງໄດ້ມີໜັງສືຄ້ຳປະກັນການປະມູນ ເປັນເງິນສົດ ຫລື ແຊັກເງິນສົດ(ວິຊ້າທະນາຄານ) ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ.
8. ທີ່ຢູ່: ກອງສະໜາມບິນລາວ, ໂທລະສັບ: 021 520542. ສຳນັກງານຕັ້ງຢູ່: ສະໜາມບິນສາກົນວັດໄຕ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.

ເຊັນແທນ ຫົວໜ້າກອງ
ຮອງຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ສັກດາ ສຸຣິສັກ